ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0312/ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 13 ກຸມພາ 2012

# ຄຳສັ່ງແນະນຳ

ເ ຖິ ງ : ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເ ລື່ ອ ງ : ໃຫ້ຄຸ້ມຄອງລາຄາ ຊີ້ນງົວ, ໝູ, ໄກ່ ແລະ ປາ.

- ອີງຕາມ ດຳລັດ ສະບັບເລກທີ 474/ນຍ, ລົງວັນທີ 18/11/2011, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

ເພື່ອເຮັດໃຫ້ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາສິນຄ້າໃນທົ່ວປະເທດເຂົ້າສູ່ລະບົບ ແລະ ລະບຽບການທີ່ລັດວາງອອກ, ໂດຍສະເພາະແມ່ນສິນຄ້າທີ່ລັດຄຸ້ມຄອງ ແລະ ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ເພື່ອເຮັດໃຫ້ທຸກພາກສ່ວນ ໄດ້ມີສ່ວນຮ່ວມໃນການປະຕິບັດບັນດານິຕິກຳທີ່ລັດວາງອອກ ດ້ວຍຄວາມເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ, ແນໃສ່ ການແຂ່ງຂັນການຄ້າທີ່ເປັນທຳ ແລະ ສ້າງຄວາມເຂັ້ມແຂງຢູ່ພາຍໃນໆແຕ່ລະດ້ານ ແລະ ໃຫ້ສາມາດແຂ່ງຂັນໄດ້ກັບພາຍນອກ.

## ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ :

1- ໃຫ້ຄຸ້ມຄອງສິນຄ້າສະບຽງອາຫານປະເພດຊີ້ນ ເປັນຕົ້ນແມ່ນ : ຊີ້ນງົວ, ໝູ, ໄກ່ ແລະ ປາ ຕາມກົນໄກເສດຖະກິດຕະຫຼາດແຕ່ລະໄລຍະ ແລະ ການຄຸ້ມຄອງຕ້ອງຄຸ້ມຄອງທັງຂອດຊື້ ແລະ ຂາຍພ້ອມກັນ, ເປັນຕົ້ນແມ່ນຂອດນາຍຮ້ອຍ ແລະ ຂອດລູກຊຽງ ບົນພື້ນຖານໂຄງປະກອບລາຄາທີ່ຊັດເຈນ.

2- ໃຫ້ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນຂະແໜງກະສິກຳ, ການເງິນ, ຕຳຫຼວດເສດຖະກິດ... ເພື່ອພ້ອມກັນຄົ້ນຄວ້າ ຂໍທິດຊີ້ນຳຈາກເຈົ້າແຂວງ ໃນການຕິດຕາມ, ກວດກາ ແລະ ເກັບກຳຂໍ້ມູນທາງດ້ານລາຄາ ແລະ ຂໍ້ມູນອື່ນໆຂອງງົວ, ໝູ, ໄກ່ ແລະ ປາ ທີ່ຜະລິດຢູ່ພາຍໃນ ໃນແຕ່ລະຂອດ (ລ້ຽງ, ນາຍຮ້ອຍ ແລະ ຂາຍຍ່ອຍ).

3- ເພື່ອຮັບປະກັນໃຫ້ລາຄາຊີ້ນດັ່ງກ່າວ ມີລາຄາໄປຕາມກົນໄກຕະຫຼາດ ແລະ ສົມເຫດສົມຜົນ; ການກຳນົດລາຄາໃນແຕ່ລະຄັ້ງ ຢູ່ແຕ່ລະຂອດ (ນາຍຮ້ອຍ ແລະ ລູກຊຽງ) ໃຫ້ພະແນກອຸດສາຫະກຳ ແລະ ການຄ້າເປັນໃຈກາງໃນການຄິດໄລ່ ໂດຍສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຕາມເງື່ອນໄຂ ແລະ ໂຄງປະກອບລາຄາຂອງແຕ່ລະຂອດຢ່າງລະອຽດ ແລະ ຊັດເຈນ; ການກຳນົດ ແມ່ນໃຫ້ອີງໃສ່ສະພາບຂໍ້ມູນຕົວຈິງຂອງແຕ່ລະແຂວງເປັນພື້ນ ຖານໃນການຄິດໄລ່ (ມີຮ່າງໂຄງປະກອບລາຄາຄັດຕິດມາພ້ອມ).

4- ໃຫ້ຄິດໄລ່ລາຄາຊີ້ນດັ່ງກ່າວ ຢ່າງເປັນລະບົບ; ການກຳນົດລາຄາໃນແຕ່ລະຂອດ ຕ້ອງອີງຕາມຂໍ້ມູນຕົວຈິງ, ບໍ່ວ່າໝູຈະມີນ້ຳໜັກ ຫຼາຍ ຫຼື ໜ້ອຍກໍຕາມ, ການຄິດໄລ່ໃຫ້ປະຕິບັດຕາມເນື້ອໃນທີ່ຢູ່ໃນໂຄງປະກອບລາຄາ ແລະ ໃຫ້ອີງຕາມສະພາບການຕົວຈິງທີ່ສົມເຫດສົມຜົນ; ສ່ວນອັດຕາກຳໄລແມ່ນກຳນົດໃຫ້ ດັ່ງນີ້:

- <u>ລາຄາຢູ່ຂອດນາຍຮ້ອຍ</u>: ໃຫ້ກຳນົດກຳໄລ 2% ຂອງຕົ້ນທຶນ ເພື່ອກຳນົດເປັນລາຄາຊີ້ນ ທີ່ສົ່ງໃຫ້ລູກຊຽງຢູ່ຕະຫຼາດ.
- <u>ລາຄາຢູ່ຂອດລູກຊຽງ</u>: ໃຫ້ກຳນົດກຳໄລ 3% ຂອງຕົ້ນທຶນ ເພື່ອກຳນົດເປັນລາຄາຊີ້ນ ທີ່ພ້ອມຈະຂາຍຍ່ອຍໃຫ້ຜູ້ບໍລິໂພກ. ຖ້າໄດ້ແຍກປະເພດຊີ້ນອອກລະອຽດແລ້ວ, ລາຄາຈະມີຄວາມແຕກຕ່າງກັນໄປຕາມແຕ່ລະ ປະເພດຂອງຊີ້ນ ແລະ ຊີ້ນສ່ວນອື່ນໆ ຕາມອັດຕາສ່ວນຂອງມັນ.

5- ໃຫ້ອີງຕາມໂຄງປະກອບລາຄາໝູເປັນຫຼັກ ເພື່ອຄິດໄລ່ໂຄງປະກອບລາຄາໄກ່ ແລະ ປາ, ໂດຍດັດແກ້ ແລະ ປັບປຸງໃຫ້ສອດຄ່ອງກັບແຕ່ລະໂຄງປະກອບລາຄາ ຢູ່ໃນແຕ່ລະຂອດຂອງຊີ້ນແຕ່ລະຊະນິດ.

6- ໃຫ້ຄຸ້ມຄອງກຸ່ມນາຍຮ້ອຍ ແລະ ກຸ່ມຊາວຄ້າ-ຂາຍຊີ້ນ(ລູກຊຽງ) ພາຍໃນແຂວງຂອງຕົນໃຫ້ໄດ້.

7- ເຜີຍແຜ່ ແລະ ຊີ້ນຳບັນດາຜູ້ປະກອບການຢູ່ແຕ່ລະຂອດ ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດໃນຂອດທີ່ຕົນຮັບຜິດຊອບຢ່າງເປັນເຈົ້າການ. ກ່ອນຈະຂຶ້ນ ຫຼື ລົງລາຄາໃນແຕ່ລະຄັ້ງ , ຜູ້ປະກອບການຕ້ອງສະເໜີການປ່ຽນແປງຂອງລາຄາດັ່ງກ່າວ ເຖິງພາກລັດທີ່ກ່ຽວຂ້ອງຊາບ ເພື່ອຮັບຮອງ ແລະ ອະນຸມັດໃຫ້ ຈຶ່ງຈະສາມາດປະຕິບັດໄດ້.

- ໃຫ້ສົມທົບກັບລະຫວ່າງຂະແໜງການກ່ຽວຂ້ອງ ນຳໃຊ້ມາດຕະການຕໍ່ຜູ້ລະເມີດ ຝ່າຝືນ ບົນພື້ນຖານສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ.ລາວວາງອອກຢ່າງເຂັ້ມງວດ ເມື່ອພົບເຫັນບຸກຄົນ ຫຼື ຫົວໜ່ວຍທຸລະກິດໃດທີ່ບໍ່ປະຕິບັດຕາມຄຳສັ່ງສະບັບນີ້ ;

8- ມາດຕະການຕໍ່ຜູ້ລະເມີດ ຕໍ່ການສວຍໂອກາດ ຂຶ້ນລາຄາໂດຍບໍ່ໄດ້ຮັບອະນຸຍາດຈາກລັດ ແມ່ນໃຫ້ປະຕິບັດດັ່ງນີ້ :

- **ຄັ້ງທີໜຶ່ງ** : ແມ່ນໃຫ້ຕັກເຕືອນ ແລະ ເຮັດບັນທຶກໄວ້.

- **ຄັ້ງທີສອງ** : ແມ່ນໃຫ້ປະຕິບັດມາດຕະການ ທີ່ລະບຸໄວ້ໃນກົດໝາຍອາຍາ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 20 ພະຈິກ 2005, ໃນໝວດທີ 7, ມາດຕາ 147.

9- ຖ້າການລະເມີດຫາກເກີດຂຶ້ນຈາກພະນັກງານລັດຜູ້ໃດຜູ້ໜຶ່ງ,ໂດຍການກະທຳທີ່ບົກພ່ອງ ຫຼື ນຳພາໄປໃນທາງທີ່ຜິດ ແມ່ນໃຫ້ປະຕິບັດວິໄນຕໍ່ບຸກຄົນດັ່ງກ່າວຢ່າງເຂັ້ມງວດ ຕາມທີ່ລະບຸໄວ້ໃນກົດໝາຍອາຍາ ສະບັບປັບປຸງ ເລກທີ 12/ສພຊ, ລົງວັນທີ 20 ພະຈິກ 2005, ໃນໝວດທີ 8.

10- ໃຫ້ທຸກພາກສ່ວນ ເປັນເຈົ້າການ ພ້ອມກັນຈັດຕັ້ງປະຕິບັດ ພາລະບົດບາດຂອງໃຜລາວ ໃຫ້ໄດ້ຮັບຜົນດີ ແລ້ວລາຍງານຜົນການຈັດຕັ້ງປະຕິບັດໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ຫຼື ສາຍຕັ້ງຂອງຕົນຊາບໃນແຕ່ລະໄລຍະ ຕາມສະພາບທີ່ເໝາະສົມ.

11- ຄຳສັ່ງສະສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

12- ທຸກຄຳສັ່ງ ແລະ ລະບຽບການ ທີ່ນຳໃຊ້ໃນເມື່ອກ່ອນ ຫາກຂັດກັບຄຳສັ່ງສະບັບນີ້ ແມ່ນໃຫ້ຍົກເລີກ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະການຄ້າ,

[illegible] ສະແຫວງສຶກສາ

<u>ສຳເນົາສົ່ງ:</u>

1- ຄະນະນຳກະຊວງ ອຄ 03 ສະບັບ " ເພື່ອລາຍງານ "

2- ບັນດາກົມ, ຫ້ອງການ, ສະຖາບັນ ອ້ອມຂ້າງກະຊວງ
" ເພື່ອຊາບ, ຕິດຕາມ ແລະ ປະຕິບັດ "

3- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ
" ເພື່ອຊີ້ນຳການປະຕິບັດຂອງພາກທຸລະກິດ "